**ແຫຼ່ງລາຍຮັບ**

ກອງປະຊຸມໃຫຍ່ຄັ້ງທີ VIII ຂອງອົງຄະນະພັກແຂວງ ໄດ້ກຳນົດການຂະຫຍາຍຕົວຂອງເສດຖະກິດຢູ່ໃນລະດັບ 12%, ລາຍໄດ້ສະເລ່ຍຕໍ່ຫົວຄົນຕໍ່ປີເທົ່າກັບ 14.489.670 ກີບ/ຄົນ/ປີ ຫຼື ເທົ່າກັບ 1.883 ໂດລາສະຫະລັດ ( 2013/14 ເສດຖະກິດຂະຫຍາຍຕົວ 12,99% ລາຍຮັບສະເລ່ຍຕໍ່ຫົວຄົນຕໍ່ປີ ປະຕິບັດໄດ້ແລ້ວ 1.684 ໂດລາສະຫະລັດ) ຕາມການຄາດຄະເນໃນສົກປີ 2014/15 ຈະປະ ຕິບັດໄດ້ 1.857 ໂດລາສະຫະລັດ/ຄົນ/ປີ.

**ໂຄງປະກອບເສດຖະກິດຕາມແຜນກອງປະຊຸມໃຫຍ່ຄັ້ງທີ VIII ກຳນົດໄວ້ ໃນປີ 2015 ໃຫ້ໄດ້:**

**- ຂະແໜງກະສິກຳ-ປ່າໄມ້** ກວມປະມານ 29,5% ຂອງ GDP(2013/14 ປະຕິບັດໄດ້ 24,21%) ຄາດຄະເນ 2014-2015 ກວມ 24,00% ຂອງ GDP.

**- ຂະແໜງອຸດສາຫະກຳ** ກວມປະມານ 44,8% ຂອງ GDP( 2013/14 ປະຕິບັດໄດ້ 39,96%) ຄາດຄະເນ 2014-2015 ກວມ 41,18% ຂອງ GDP.

**- ຂະແໜງບໍລິການ** ກວມປະມານ 25,7% ຂອງ GDP (2013/14 ປະຕິບັດໄດ້ 35,23%) ຄາດຄະເນ 2014-2015 ກວມ 34,80% ຂອງ GDP.

+ ສົກປີ 2011-2015 ສະພາອະນຸມັດໂຄງການລົງທຶນຂອງລັດທັງໝົດມີ 1.382 ໂຄງການ, ມູນຄ່າລວມທັງໝົດ 17.075,45 ຕື້ກີບ (ທຶນພາຍໃນ 14.901,57 ຕື້ກີບ ແລະ ທຶນຕ່າງປະເທດ 2.173,88 ຕື້ກີບ), ມູນຄ່າອະນຸມັດ 510,15 ຕື້ກີບ (ທຶນພາຍໃນ 303,77 ຕື້ກີບ ແລະ ທຶນຕ່າງປະເທດ 206,38 ຕື້ກີບ), ທຽບໃສ່ແຜນ 5 ປີ 2011-2015 ປະຕິບັດໄດ້ລື່ນແຜນການ 22,47% ຫຼື ເທົ່າກັບ 114,67 ຕື້ກີບ. (ສົມທຽບງົບປະມານທີ່ອະນຸມັດຕົວຈິງ 2006-2010 ມູນຄ່າ 234,59 ຕື້ກີບ, 2011-2015 ມູນຄ່າ 510,15 ຕື້ກີບ ເພີ້ມຂື້ນ 54,01%).

+ ການລົງທຶນຊ່ວຍເຫຼືອເພື່ອການພັດທະນາ ແລະ ກູ້ຢືມ ແຕ່ປີ 2011-2015 ມີ 40 ໂຄງການ, ເປັນເງິນກີບ 852,41 ຕື້ກີບ ແລະ ເປັນເງິນໂດລາ 84.280.064 ໂດລາສະຫະລັດ, ໃນນັ້ນ: ທຶນຊ່ວຍເຫຼືອລ້າ ODA ມີ 03 ໂຄງການ, ມູນຄ່າ 18.000.000 ໂດລາສະຫະລັດ, ທຶນ NGO ມີ 12 ອົງການ, 26 ໂຄງການ, ມູນຄ່າ 34.280.064 ໂດລາສະຫະລັດ ແລະ ທຶນກູ້ຢືມ 01 ໂຄງການ, ມູນຄ່າ 32.000.000 ໂດລາສະຫະລັດ.

+ ສົກປີ 2011-2015 ມີການລົງທຶນພາຍໃນ-ຕ່າງປະເທດທັງໝົດ 182 ໂຄງການ, ມີມູນຄ່າ 13.265,46 ຕື້ກີບ,ທຶນຈົດທະບຽນ 4.847,89 ຕື້ກີບ, ທຽບໃສ່ແຜນການ 5 ປີ ປະຕິບັດໄດ້ເພີ້ມຂື້ນ 177%.

+ ສົກປີ 2011-2015 ທະນາຄານສາມາດລະດົມແຫລ່ງທຶນໄດ້ 1.488,51 ຕື້ກີບ, ປ່ອຍສິນເຊື່ອໄດ້ 1.088,02 ຕື້ກີບ.

+ ຄາດຄະເນສົກປີ 2015 ອັດຕາແລກປ່ຽນໃນລະດັບ 7.696 ກີບ/ 1 ໂດລາສະຫະລັດ( 2013/14 ເທົ່າກັບ 8.059 ກີບ/1 ໂດລາສະຫະລັດ.

+ ຄາດຄະເນປະຊາກອນປີ 2015 ເທົ່າກັບ 404.654 ຄົນ( 2013/14 ມີ 396.729 ຄົນ ອັດຕາການຂະຫຍາຍຕົວຢູ່ໃນລະດັບ 2% ).

+ ການເກັບລາຍຮັບເຂົ້າງົບປະມານຕາມແຜນທີ່ກຳນົດໄວ້ແຕ່ລະປີເພີ່ມຂື້ນປະມານ 20% ເທົ່າກັບ 1.601,47 ຕື້ກີບ

(ໃນປີ 2014-2015), ແຕ່ການຈັດຕັ້ງປະຕິບັດຕົວຈິງເຖິງປະຈຸບັນໄດ້ແລ້ວ 2.100,35 ຕື້ກີບ(ໃນນັ້ນ: ງົບປະມານສູນກາງ 970,19 ຕື້ກີບ, ງົບປະມານທ້ອງຖິ່ນ 1.130,13 ຕື້ກີບ), ຖ້າທຽບໃສ່ແຜນ 5 ປີ ຂອງກອງປະຊຸມໃຫຍ່ຄັ້ງທີ່ VIII ຂອງອົງຄະນະພັກແຂວງປະຕິບັດໄດ້ 127,24% ແລະ ຖ້າທຽບໃສ່ແຜນໄດ້ຮັບຕົວຈິງໃນ 5 ປີ ປະຕິບັດໄດ້ 100,64%. ລາຍຈ່າຍງົບປະມານຂອງແຂວງປະຕິບັດໄດ້ 1.789,80 ຕື້ກີບ, ເທົ່າກັບ 96,76%. ຖ້າທຽບໃສ່ແຜນ 5 ປີ ຂອງກອງປະຊຸມໃຫຍ່ຄັ້ງທີ່ VIII ຂອງອົງຄະນະພັກແຂວງປະຕິບັດໄດ້ 157,03% ແລະ ຖ້າທຽບໃສ່ແຜນລາຍຈ່າຍຕົວຈິງໃນ 5 ປີ ປະຕິບັດໄດ້ 96,76%.

+ ການຜະລິດເຂົ້າໃນປີ 2014 ໄດ້ 328.620 ໂຕນ, ເພີ້ມຂື້ນ 6,27%/ປີ ( ສົກປີ 2015 ການຜະລິດເຂົ້າໃຫ້ໄດ້ 382.340 ໂຕນ ).

+ ຄາດຄະເນລວມຍອດຜະລິດຕະພັນການສົ່ງອອກເພີ້ມ 11%/ປີ, ເທົ່າກັບ 170,36 ລ້ານໂດລາສະຫະລັດ, ມາເຖິງປະຈຸບັນປະຕິບັດໄດ້ 405,57 ລ້ານໂດລາສະຫະລັດ, ເພີ້ມຂື້ນ 238% ຂອງແຜນ ການ 5 ປີ, ການນຳເຂົ້າຢູ່ໃນລະດັບ 7%/ປີ ເທົ່າກັບ 456,06 ລ້ານໂດລາສະຫະລັດ, ມາເຖິງປະຈຸບັນປະຕິບັດໄດ້ 932,62 ລ້ານໂດລາສະຫະລັດ, ເພີ້ມຂື້ນ 51,10% ທຽບໃສ່ແຜນ 5 ປີ.

+ ການຈໍລະຈອນສິນຄ້າບັນລຸ 8.358,64 ຕື້ກີບ ທຽບໃສ່ແຜນ 5 ປີ ເພີ້ມຂື້ນ 604%.

+ ການຜະລິດແຮ່ທາດຮອດປະຈຸບັນປະຕິບັດ ໄດ້ 188,80 ລ້ານໂດລາສະຫະລັດ, ການຈຳໜ່າຍ 194,88 ລ້ານໂດລາສະຫະລັດ. ໃນນັ້ນ: ຈຳໜ່າຍພາຍໃນ 2,42 ລ້ານໂດລາສະຫະລັດ ແລະ ຈຳໜ່າຍອອກຕ່າງປະເທດ 192,45 ລ້ານໂດລາສະຫະລັດ.

+ ຄາດຄະເນການຊົມໃຊ້ໄຟຟ້າໃນຄົວເຮືອນ ປີ 2015 ຕາມແຜນທີ່ໄດ້ກຳນົດໄວ້ໃຫ້ໄດ້ 90%, ມາເຖິງປະຈຸບັນປະຕິບັດໄດ້ 93,19% ຂອງຄົວເຮືອນທັງໝົດ.

+ ອັດຕາການການເຂົ້າຮຽນຊັ້ນປະຖົມແຕ່ອາຍຸ 6 ຫາ 10 ປີ ຕາມແຜນໄດ້ກຳນົດໄວ້ໃຫ້ໄດ້ 98% ( ໃນປີ 2015 ), ມາເຖິງປະຈຸບັນປະຕິບັດໄດ້ 98,8% (ທຽບໃສ່ 5 ປີຜ່ານມາເພີ້ມຂື້ນ 2,6%) ອັດຕາເຂົ້າຮຽນຊັ້ນມັດທະຍົມຕອນຕົ້ນຕາມແຜນໄດ້ກຳນົດໄວ້ໃຫ້ໄດ້ 60% ( ໃນປີ 2015 ), ມາເຖິງປະຈຸບັນປະຕິບັດໄດ້ 67,8% (ທຽບໃສ່ 5 ປີ ຜ່ານມາເພີ້ມຂື້ນ 14%). ອັດຕາເຂົ້າຮຽນຊັ້ນມັດ ທະຍົມຕອນປາຍຕາມແຜນໄດ້ກຳນົດໄວ້ໃຫ້ໄດ້ 40%( ໃນປີ 2015 ), ມາເຖິງປະຈຸບັນປະຕິບັດໄດ້ 36,9% (ທຽບໃສ່ 5 ປີ ຜ່ານມາເພີ້ມຂື້ນ 7,6%). ອັດຕາການຮູ້ໜັງສືໃນກຸ່ມອາຍຸ 15 ຫາ 40 ປີ ຕາມແຜນໄດ້ກຳນົດໄວ້ໃຫ້ໄດ້ 99,50%( ໃນປີ 2015 ), ມາເຖິງປະຈຸບັນໄດ້ 99,01%.

+ ຫລຸດຜ່ອນອັດຕາການຕາຍຂອງແມ່ຕາມແຜນໄດ້ກຳນົດໄວ້ໃຫ້ໄດ້ 260/100.000 ຄົນ, ມາເຖິງປະຈຸບັນປະຕິບັດໄດ້ 79/100.000 ຄົນ ທຽບໃສ່ແຜນ 5 ປີ ຫລື່ນຄາດໝາຍ. ຫລຸດຜ່ອນການຕາຍຂອງເດັກລຸ່ມ 5 ປີ ຕາມແຜນໄດ້ກຳນົດໄວ້ໃຫ້ໄດ້ 49/1.000 ຄົນ, ມາເຖິງປະຈຸບັນປະຕິບັດໄດ້ 27/1.000 ຄົນ ທຽບໃສ່ແຜນ 5 ປີ ຫລື່ນຄາດໝາຍ ແລະ ເດັກອາຍຸຫລຸດ 1 ປີ ຕາມແຜນໄດ້ກຳນົດໄວ້ໃຫ້ໄດ້ 43/1.000 ຄົນ, ມາເຖິງປະຈຸບັນປະຕິບັດໄດ້ 22/1.000 ຄົນ ທຽບໃສ່ແຜນ 5 ປີ ລື່ນຄາດໝາຍ.

**+ ການບໍລິການທາງຜ່ານ:**

- ກ່ອນການກໍ່ສ້າງຂົວມິດຕະພາບລາວ-ໄທ ແຫ່ງທີ່ 3 ໃນສົກປີ 2009-2010 ບໍລິມາດສິນຄ້າ 112.838 ໂຕນ, ບໍລິມາດຂົນສົ່ງສິນຄ້າທາງບົກ 130.997 ໂຕນ, ຈໍລະຈອນ 6.222.287 ໂຕນ/ກມ, ບໍລິມາດຂົນສົ່ງສິນຄ້າທາງນໍ້າ 114.922 ໂຕນ, ຈໍລະຈອນ 131.884 ໂຕນ/ກມ, ບໍລິມາດໂດຍສານທາງບົກ 154.921 ໂຕນ, ຈໍລະຈອນ 2.184.188 ໂຕນ/ກມ, ບໍລິມາດໂດຍສານທາງນໍ້າ 47.424 ໂຕນ, ຈໍລະຈອນ 69.657 ໂຕນ/ກມ, ມີນັກທ່ອງທ່ຽວເຂົ້າມາແຂວງຄຳມ່ວນທັງໝົດ 136.664 ຄົນ, ສາມາດສ້າງລາຍຮັບໄດ້ 81.18 ຕື້ກີບ

- ຫລັງການກໍ່ສ້າງຂົວມິດຕະພາບລາວ-ໄທ ແຫ່ງທີ່ 3 ໃນສົກປີ 2013-2014, ບໍລິມາດຂົນສົ່ງສິນຄ້າ 2.264.420 ໂຕນ, ບໍລິມາດຈໍລະຈອນສິນຄ້າ 174.227.511 ໂຕນ.ກມ.ບໍລິມາດຂົນສົ່ງໂດຍສານທາງບົກ 1.488.374 ຄົນ, ບໍລິມາດຈໍລະຈອນ 120.720.039 .ກມ, ບໍລິມາດຂົນສົ່ງສິນຄ້າທາງນ້ຳ 114.922 ໂຕນ, ຈໍລະຈອນ 131.884 ໂຕນ/ກມ, ບໍລິມາດໂດຍສານທາງນ້ຳ 47.424 ຄົນ, ຈໍລະຈອນ 69.657 ຄົນ/ກມ, ມີນັກທ່ອງທ່ຽວເຂົ້າມາແຂວງຄຳມ່ວນທັງໝົດ 407.464 ຄົນ, ສາມາດສ້າງລາຍຮັບໄດ້ 251,59 ຕື້ກີບ.

- ການລຶບລ້າງຄວາມທຸກຍາກຂອງແຂວງຫຼຸດລົງຈາກ 100 ບ້ານທຸກຍາກ, 4.005 ຄອບ ຄົວທຸກຍາກ ໃນສົກປີ 2009-2010, ຍັງເຫຼືອ 15 ບ້ານທຸກຍາກເທົ່າກັບ 2,6% ຂອງຈຳນວນບ້ານທົ່ວແຂວງ, 1.954 ຄອບຄົວທຸກຍາກ ເທົ່າກັບ 2,6% ຂອງຄອບຄົວທົ່ວແຂວງ ( ໃນສົກປີ 2014-2015 ).